# ບໍລິສັດ ບີແວັກລາວ

# ຄູ່ມືການນຳໃຊ້
# ລະບົບແຈ້ງພາສີປະຕູດຽວ

LAO NATIONAL SINGLE WINDOW

| ຂັ້ນຕອນການນຳໃຊ້: | |
|---|---|
| ✓ ກວດເບິ່ງເອກະສານທີ່ຄັດຕິດມາກັບໃບຄຳຮ້ອງ | |
| **ໂມດູລ໌:** | **ໃຊ້ສະເພາະ:** |
| ໃບອະນຸຍາດ<br>Permit Module | • ເຈົ້າໜ້າທີ່ຜູ້ໄດ້ຮັບມອບໝາຍຈາກ ກອງຄຸ້ມຄອງ ພາຫະນະ ແລະ ການຂັບຂີ່, ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະ ຂົນສົ່ງ<br>• ແລະ ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ທີ່ຂຶ້ນ ກັບ18 ແຂວງທົ່ວປະເທດ |
| **ເລກທີ:** | |
| BIVACLAO.VTE.US.IN.05.1 | |
| **ເວີຊັນ:** | **ວັນທີ:** |
| 1.0 | ວັນ**ອັງຄານ**, ວັນທີ 22 ເດືອນຕຸລາ ປີ 2019 |

**ສາລະບານ**

ພາກສະເໜີ ... 3

ຄຳຫຍໍ້ ແລະ ອະທິບາຍຄຳສັບ ... 3

ສັນຍາລັກ ແລະ ປຸ່ມຕ່າງໆໃນລະບົບ ... 4

ໜ້າທີ່ຫຼັກຂອງເຈົ້າໜ້າທີ່ກົມຂົນສົ່ງທີອອກທະບຽນຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ... 5

ຜູ້ທີ່ຈະນຳໃຊ້ລະບົບ LNSW ຕ້ອງກະກຽມ ... 5

ການເຂົ້າສູ່ລະບົບ Log-in to LNSW Platform ... 5

I. ການຄົ້ນຫາຂໍ້ມູນຂອງໃບອະນຸຍາດ ແລະ ຂໍ້ມູນການຂົນສົ່ງກັບເອກະສານຄັດຕິດຕ່າງໆທີ່ກ່ຽວຂ້ອງ ... 6

II. ວິທີການປ່ຽນລະຫັດຜ່ານໃໝ່ /Changed new password ... 11

III. ກໍລະນີ ລືມລະຫັດຜ່ານ / (ຕ້ອງການປ່ຽນລະຫັດຜ່ານໃໝ່)Forget password ... 13

IV. ຂໍ້ມູນເພີ່ມເຕີມ ... 14

## ພາກສະເໜີ

ຄູ່ມືສະບັບນີ້ເປັນເອກະສານທີ່ສ້າງຂື້ນເພື່ອຊ່ວຍໃຫ້ຂະແໜງການພາກລັດ ເຈົ້າໜ້າທີ່ອອກທະບຽນ ໂດຍສະເພາະແມ່ນເຈົ້າໜ້າທີ່ ຜູ້ໄດ້ຮັບມອບໝາຍ ຈາກ ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່, ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ, ແລະ ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ທີ່ຂື້ນກັບ18 ແຂວງທົ່ວປະເທດ ໃຫ້ມີຄວາມເຂົ້າໃຈຕໍ່ກັບວິທີການນຳໃຊ້ລະບົບແຈ້ງພາສີປະຕູດຽວ (LNSW) ກ່ຽວກັບການກວດເບິ່ງໃບຄຳຮ້ອງ, ໃບອະນຸຍາດ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງ ແບບເອເລັກໂຕຣນິກໂດຍຜ່ານລະບົບ LNSW.

## ຄຳຫຍໍ້ ແລະ ອະທິບາຍຄຳສັບ

| ອັກສອນຫຍໍ້ | ອະທິບາຍ |
|---|---|
| LNSW | Lao national Single Window ລະບົບແຈ້ງພາສີປະຕູດຽວແຫ່ງຊາດ |
| Importer/Exporter(EO) | ຜູ້ນຳເຂົ້າ/ ຜູ້ສົ່ງອອກ Economic Operator |
| Shipping Agent (SA) | ຜູ້ບໍລິການແຈ້ງພາສີ (ຊິບປິ້ງ) |
| MoIC | ກະຊວງ ອຸດສາຫະກຳ ແລະ ການຄ້າ |
| DIMEX | ກົມການນຳເຂົ້າ ແລະ ສົ່ງອອກ |
| MoPWT | ກະຊວງ ໂຍທາທິການ ແລະ ຂົນສົ່ງ |
| DoT | ກົມຂົນສົ່ງ |
| Permit (PRM) | ໃບອະນຸຍາດ |
| License | ໃບອະນຸຍາດ |
| In Progress | ກຳລັງດຳເນີນການກວດກາຄຳຮ້ອງ |
| Pending | ລໍຖ້າການກວດສອບພາກສ່ວນທີ່ກ່ຽວຂ້ອງ |
| Active | ໃບອະນຸຍາດໄດ້ຮັບການອະນຸມັດແລ້ວ |
| Permit rejected for amendment | ໃບອະນຸຍາດຖືກປະຕິເສດ ແລະ ລໍຖ້າການດັດແກ້ |
| Expired | ໃບອະນຸຍາດໝົດອາຍຸການນຳໃຊ້. |
| Consumed | ໃບອະນຸຍາດຖືກນຳໃຊ້ໝົດແລ້ວ |
| Permit Reviewed & Recommended | ໃບອະນຸຍາດກຳລັງໄດ້ຮັບຄົ້ນຄວ້າ ແລະ ມີທິດຊີ້ນຳ ຈາກພະນັກງານວິຊາການໄປຫານຂັ້ນຫົວໜ້າພະແນກ |
| SD | Summary of Declaration ໃບກຳກັບການຂົນສົ່ນຄ້າ |
| TD | Transport Document ເອກະສານການຂົນສົ່ງ |
| LP | Line of Package ລາຍການສິນຄ້າ |
| C-Y | Container yard (C Y) ສານສິນຄ້າ ຊີ ວາຍ |

## ສັນຍາລັກ ແລະ ປຸ່ມຕ່າງໆໃນລະບົບ

| ຊື່ສັນຍາລັກ | ຮູບສັນຍາລັກ | ຄຳອະທິບາຍ |
|---|---|---|
| ໂມດູລ໌ ໃບອະນຸຍາດ |  | ກົດໃສ່ປຸ່ມ **"ໃບອະນຸຍາດ"**, ຈະເປີດໜ້າຈໍຫຼັກຂອງໂມດູລ໌ ໃບອະນຸຍາດຂຶ້ນມາ |
| ລະຫັດທີ່ຂຶ້ນຕົ້ນດ້ວຍ (L) |  | ແມ່ນລະຫັດຜູ້ນຳໃຊ້ລະບົບຂອງ**ເຈົ້າໜ້າທີ່ພາກລັດ**, ທະນາຄານ ແລະ ພະນັກງານຈາກ LNSW |
| ລະຫັດທີ່ຂຶ້ນຕົ້ນດ້ວຍ (E) |  | ແມ່ນລະຫັດຜູ້ນຳໃຊ້ລະບົບຂອງ**ຜູ້ປະກອບການ**, ຕົວແທນຂອງຜູ້ປະກອບການ, ຜູ້ຂົນສົ່ງ |
| ໜ້າຫຼັກ |  | ກົດໃສ່ປຸ່ມ **"ໜ້າຫຼັກ"** ຈະເຂົ້າສູ່ໜ້າໂມດູລ໌ຫຼັກຂອງລະບົບ |
| ອອກຈາກລະບົບ |  | ກົດໃສ່ປຸ່ມ **"ອອກຈາກລະບົບ"** ເພື່ອອອກຈາກລະບົບ |
| ຟັງຊັນຫຼັກໃບອະນຸຍາດ |  | ຟັງຊັນຫຼັກໃບອະນຸຍາດ ປະກອບມີ 2 ຟັງຊັນຄື:<br>1. **ອະນຸຍາດໃຫ້ຄົ້ນຫາໄດ້:** ຄົ້ນຫາໂດຍການປ້ອນເລກທີໃບອະນຸຍາດ<br>2. **ການສະເໜີຂໍອະນຸຍາດຄົ້ນຫາ:** ຄົ້ນຫາໂດຍການປ້ອນເລກທີ ໃບຄຳຮ້ອງ |
| ບົດບັນທຶກ |  | ຟັງຊັນບົດບັນທຶກຈະມີ **ໃບອະນຸຍາດທີ່ໄດ້ອະນຸມັດແລ້ວ:** ໃຊ້ເພື່ອໂຫຼດເບິ່ງລາຍການໃບອະນຸຍາດທີ່ໄດ້ຮັບອະນຸຍາດແລ້ວ |
| ລາຍການກິດຈະກຳທີ່ຈະຕ້ອງເຮັດ |  | **ລາຍການກິດຈະກຳທີ່ຈະຕ້ອງເຮັດ (To-Do List) (ສຳລັບເຈົ້າໜ້າທີ່ອອກທະບຽນ ລວມທັງຂັ້ນສູນກາງ ແລະ ທ້ອງຖິ່ນ ສ່ວນນີ້ຈະບໍ່ສາມາດເຮັດຫຍັງໄດ້)** |
| ພັບໜ້າຈໍ |  | ປຸ່ມປັບໜ້າຈໍ ໃຫ້ກວ້າງອອກ ຫຼື ແຄບເຂົ້າ |
| ຄົ້ນຫາ |  | ປຸ່ມດັ່ງກ່າວໃຊ້ເພື່ອຄົ້ນຫາໃບອະນຸຍາດ ແລະ ລະຫັດໃບຄຳຮ້ອງຂໍອະນຸຍາດ |
| ສະແດງ |  | ເພື່ອສະແດງຂໍ້ມູນລາຍລະອຽດຂອງໃບອະນຸຍາດ |
| ກິດຈະກຳ |  | ປຸ່ມດັ່ງກ່າວແມ່ນຕາຕະລາງຕິດຕາມທຸກກິດຈະກຳທີ່ຜູ້ນຳໃຊ້ໄດ້ດຳເນີນການຜ່ານມາໃນໃບສະເໜີຂໍອະນຸຍາດ |

| | | |
|---|---|---|
| ພິມອອກ |  | ສະແດງໃບອະນຸຍາດຂຶ້ນມາໃນຮູບແບບໄຟລ໌ PDF |
| ຂະຫຍາຍ ແລະ ຫຍໍ້ໜ້າຕ່າງ ຂອງ ລາຍການກິດຈະກໍາທີ່ຈະຕ້ອງເຮັດ |  | ກັບຄືນ ToDo list ໄປເບື້ອງຂວາ ຫຼື ຊ້າຍ |
| ToDo List |  | **ກົດ ເພື່ອເປີດ ແລະ ປິດ** ລາຍການກິດຈະກໍາທີ່ຈະຕ້ອງເຮັດ **(ສໍາລັບເຈົ້າໜ້າທີ່ອອກທະບຽນ ລວມທັງຂັ້ນສູນກາງ ແລະ ທ້ອງຖິ່ນ ສ່ວນນີ້ຈະບໍ່ສາມາດເຮັດຫຍັງໄດ້)** |
| Refresh |  | ເລີ່ມໃໝ່ **(ສໍາລັບເຈົ້າໜ້າທີ່ອອກທະບຽນ ລວມທັງຂັ້ນສູນກາງ ແລະ ທ້ອງຖິ່ນ ສ່ວນນີ້ຈະບໍ່ສາມາດເຮັດຫຍັງໄດ້)** |

## ໜ້າທີ່ຫຼັກຂອງເຈົ້າໜ້າທີ່ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ

| ລະດັບ | ໜ້າທີ່ຂອງແຕ່ລະຂັ້ນ | ກວດເບິ່ງໃບອະນຸຍາດນໍາເຂົ້າ ທີ່ອອກໂດຍກົມການນໍາເຂົ້າ ແລະ ສົ່ງອອກ | ກວດເບິ່ງໃບອະນຸຍາດດ້ານເຕັກນິກ ທີ່ອອກໂດຍກົມຂົນສົ່ງ | ກວດເບິ່ງເອກະສານການແຈ້ງເສຍພາສີ | ກວດເບິ່ງເອກະສານຄັດຕິດອື່ນໆ ທີ່ກ່ຽວຂ້ອງ |
|---|---|---|---|---|---|
| 1 | ຂັ້ນສູນກາງ | √ | √ | √ | √ |
| 2 | ຂັ້ນທ້ອງຖິ່ນ | √ | √ | √ | √ |

## ຜູ້ທີ່ຈະນໍາໃຊ້ລະບົບ LNSW ຕ້ອງກະກຽມ

- ຕ້ອງມີຄວາມຮູ້ພື້ນຖານກ່ຽວກັບການນໍາໃຊ້ຄອມພິວເຕີ ແລະ ຄອມພິວເຕີດັ່ງກ່າວນັ້ນຕ້ອງມີ PDF ຊອຟແວຣ໌,
- ຕ້ອງມີ User ID ຜູ້ໃຊ້ ແລະ ລະຫັດຜ່ານ, ຊຶ່ງທີມງານ LNSW ຈະເປັນຜູ້ສ້າງໃຫ້,
- ມີສັນຍານ ແລະ ເຊື່ອມຕໍ່ອິນເຕີເນັດ,

## ການເຂົ້າສູ່ລະບົບ Log-in to LNSW Platform

1. ເຂົ້າເວັບໄຊທ໌ຂອງ LNSW ດ້ວຍ https://www.laonsw.net
2. ກົດໃສ່ປຸ່ມ "Log-in"
3. ປ້ອນ ໄອດີ ຜູ້ນໍາໃຊ້ໃສ່
4. ປ້ອນລະຫັດຜ່ານໃສ່
5. ປ້ອນຜົນການບວກເລກໃສ່ (ຜົນການບວກເລກນັ້ນຈະແຕກຕ່າງກັນ ທຸກຄັ້ງເມື່ອມີການເຂົ້າສູ່ລະບົບ)
6. ກົດໃສ່ເຄື່ອງໝາຍ OK ເພື່ອເຂົ້າສູ່ລະບົບ







# I. ການຄົ້ນຫາຂໍ້ມູນຂອງໃບອະນຸຍາດ ແລະ ຂໍ້ມູນການຂົນສົ່ງກັບເອກະສານຄັດຕິດຕ່າງໆທີ່ກ່ຽວຂ້ອງ

## 1.1 ການຄົ້ນຫາຂໍ້ມູນການຂົນສົ່ງກັບເອກະສານຄັດຕິດຕ່າງໆທີ່ກ່ຽວຂ້ອງ

ການຄົ້ນຫາຂໍ້ມູນການຂົນສົ່ງກັບເອກະສານຄັດຕິດຕ່າງໆທີ່ກ່ຽວຂ້ອງ ດ້ວຍປຸ່ມ **"ໃບກຳກັບການຂົນສົ່ງສິນຄ້າ"** ປະຕິບັດຕາມຂັ້ນຕອນລຸ່ມນີ້:




1. ກົດໃສ່ ເອກະສານຂົນສົ່ງສິນຄ້າ
2. ກົດໃສ່ 

3. ປ້ອນເລກທະບຽນ SD ໃສ່
4. ກົດໃສ່ ເຄື່ອງໝາຍຄົ້ນຫາ 
5. ຜົນຂອງການຄົ້ນຫາຈະສະແດງຂຶ້ນມາ ແລ້ວກົດໃສ່ ແຖວຂອງ TD ໃຫ້ເປັນສີຟ້າເຂັ້ມ
6. ກົດໃສ່ປຸ່ມ  **"ສະແດງ ເອກະສານຄັດຕິດ"**




7. ພາກສ່ວນເອກະສານຄັດຕິດ: ກົດໃສ່ແຖວຂອງເອກະສານທີ່ຕ້ອງການເບິ່ງລາຍລະອຽດໃຫ້ເປັນສີຟ້າ
8. ກົດໃສ່ປຸ່ມ **ຄົ້ນຫາໄຟລ໌** ເອກະສານເປີດຂຶ້ນໜ້າຈໍ (ຫາກຕ້ອງການເບິ່ງເອກະສານໂຕອື່ນໆ ໃຫ້ປະຕິບັດຄືກັບທີ່ກ່າວໄວ້ນີ້)



ຕົວຢ່າງ; ໃບແຈ້ງເສຍພາສີ ເປັນລາຍລະອຽດ (ໃບບໍ9)



*7056094*

ASEAN CUSTOMS DECLARATION DOCUMENT

ຕົວຢ່າງ; ໃບຢັ້ງຢືນການສໍາລະຄ່າພາສີ (ໃບບໍ40)


ໃບຢັ້ງຢືນການເສັຍພາສີ

No. 947057

029270

R S C 1 0

M

12/12/2018

FORD

Ranger

PSAT 2730444

2200

4

2018

4

25/12/2018

RsC10

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
Lao People's Democratic Republic

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
Peace Independence Democracy Unity Prosperity

ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce
ກົມການນຳເຂົ້າ ແລະ ສົ່ງອອກ
Department of Import and Export

ກຂອ.ປຂອ
DIMEX.IMEXDIV

ເລກທີ / Ref.no: 00154253
ວັນທີ / Date: 19/07/2019

## ໃບອະນຸຍາດນຳເຂົ້າ / Import License

### I. ຂໍ້ມູນຂອງຜູ້ຮ້ອງຂໍ / Applicant Details

ຊື່ / Name: Phetdavanh Logistic Co., Ltd
ເລກປະຈຳຕົວຜູ້ເສຍອາກອນຂອງຜູ້ຮ້ອງຂໍ/Applicant TIN: 555000555111 , ລົງວັນທີ / Date: 19/07/2019
ທີ່ຢູ່ / Address:
ບ້ານ / Village: Chomany
ເມືອງ / District: Saysetha
ແຂວງ / Province: VTE, LAOS
ເບີໂທລະສັບ ຫຼື ມືຖື / Telephone or Mobile: 020 23626265
ແຟັກ / Fax: 021
ອີເມວ / Email: nazatest1990@gmail.com

### II. ຂໍ້ມູນຂອງຜູ້ສົ່ງອອກ / Exporter Details

ບໍລິສັດ/Company: TOYOTATHAILAND
ທີ່ຢູ່ / Address:
ປະເທດ / Country:
ເບີໂທລະສັບ ຫຼື ມືຖື / Telephone or Mobile:
ແຟັກ / Fax:
ອີເມວ / Email:

### III. ຂໍ້ມູນຂອງຜູ້ຊົມໃຊ້ສຸດທ້າຍ / End User Details

ຊື່ / Name: Phetdavanh Logistic Co., Ltd
ທີ່ຢູ່ / Address: Chomany Saysetha VTE, LAOS
ເລກປະຈຳຕົວຜູ້ເສຍອາກອນ / TIN: 555000555111
ເບີໂທລະສັບ ຫຼື ມືຖື / Telephone or Mobile: 020 23626265
ແຟັກ / Fax: 021

### IV. ຂໍ້ມູນການນຳເຂົ້າ / Import Details

ລະບອບການນຳເຂົ້າ/ Import Regime: IM4
ປະເພດນຳເຂົ້າ / Type of Import: 40
ເອກະສານອ້າງອີງ ໃນກໍລະນີໄດ້ຮັບການຍົກເວັ້ນ ຫຼື ອື່ນໆ / Reference Documents, in case of Exemption or Other :
ເອກະສານອ້າງອີງ ເລກທີ / Approval No: ລົງວັນທີ / Date:
ເອກະສານອ້າງອີງ ເລກທີ / Approval No: ລົງວັນທີ / Date:
ເອກະສານອ້າງອີງ ເລກທີ / Approval No: ລົງວັນທີ / Date:

| ລຳດັບ No. | ລາຍການສິນຄ້າ Description of Goods | ລະຫັດພາສີ HS Code | ຈຳນວນ Quantity | ຫົວໜ່ວຍ Unit | ມູນຄ່າຕໍ່ຫົວໜ່ວຍ Value per Unit | ສະກຸນເງິນ Currency | ມູນຄ່າລວມ Total Value |
|---|---|---|---|---|---|---|---|
| 1 | Toyota Landcruizerd Top 2019 X52211 | 8702101000 | 5.00 | Unit | 10000.00 | United States of America, Dollars | 50,000.00 |
| | | | | | | ລວມ / Total | 50,000.00 |

| | |
|---|---|
| ດ່ານນຳເຂົ້າ / Customs Clearance Office | R5C30-Friendship Bridge 1 |
| ໃບອະນຸຍາດສະບັບນີ້ມີອາຍຸນຳໃຊ້ຮອດວັນທີ<br>Import License valid until | 19/10/2019 |
| ຕໍ່ອາຍຸນຳໃຊ້ຮອດວັນທີ<br>Import License Extended until | |

**ໝາຍເຫດ / Remark:**

1. ຜູ້ຮ້ອງຂໍຕ້ອງຮັບຜິດຊອບຕໍ່ຂໍ້ມູນທີ່ລະບຸໄວ້ໃນໃບອະນຸຍາດສະບັບນີ້.
   Submission of false information shall result in penalties.
2. ຫ້າມດັດແກ້ ຫຼື ປ່ຽນແປງເນື້ອໃນເອກະສານໂດຍບໍ່ໄດ້ຮັບອະນຸຍາດ.
   Do not alter or modify without authorization.

ຮຽນແທນ. ຫົວໜ້າກົມ
On behalf of Director General
ຫົວໜ້າກົມ / Director General

ສຸລິນທອນ ພິລາວົງ
SOULINHON PHILAVONG

1

ເອກະສານຕົ້ນຕໍທີ່ຕ້ອງກວດການັ້ນ ລວມມີດັ່ງນີ້:

1) ໃບອະນຸຍາດ ທີ່ອອກດ້ວຍກົມນຳເຂົ້າ ແລະ ສົ່ງອອກ
2) ໃບອະນຸຍາດ ທີ່ອອກດ້ວຍກົມຂົນສົ່ງ
3) ໃບແຈ້ງພາສີເປັນລາຍລະອຽດ (ໃບບ40) ຈາກຂະແໜງພາສີ
4) ໃບຢັ້ງຢືນການສຳລະຄ່າພາສີ-ອາກອນ (ໃບບ9) ຈາກຂະແໜງພາສີ
5) ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ (ໃບທະບຽນວິສາຫະກິດ, ໃບຢັ້ງຢືນການມອບເລກປະຈຳຕົວຜູ້ເສຍອາກອນ, ໃບຢັ້ງຢືນການມອບພັນທະອາກອນປະຈຳປີ, ລາຍການຫຸ້ມຫໍ່ສິນຄ້າ Packing List, ໂກຕ້າ, ສັນຍາຂາຍ ຫລື ໃບອິນວອຍ Invoices, ໜັງສືມອບສິດ Power of Attorney)

## II. ວິທີການປ່ຽນລະຫັດຜ່ານໃໝ່ / Changed new password

1. ທ່ານຈະໄດ້ຮັບອີເມລ໌ການແຈ້ງເຕືອນ ແລະ ມີລະຫັດຜູ້ນຳໃຊ້ໃໝ່ ແລະ ລະຫັດຜ່ານ


ອະນຸມັດຜູ້ນຳໃຊ້ລະບົບໃໝ່

noreply@laonsw.net
To: pk_davy.a35@yahoo.com

ສະບາຍດີທ່ານຜູ້ນຳໃຊ້ລະບົບ,

ບັນຊີໃນລະບົບ LNSW ຂອງທ່ານໄດ້ຖືກປົດລັອກແລ້ວ. ລະຫັດຜູ້ນຳໃຊ້ ແລະ ລະຫັດຜ່ານຂອງທ່ານແມ່ນ:
**ລະຫັດຜ່ານເຂົ້າສູ່ລະບົບ:**E531
**ລະຫັດຜ່ານ:**@m8mJM (ນີ້ເປັນຂໍ້ຄວາມທີ່ລະບົບສ້າງຂື້ນ)
ນຳໃຊ້ໜັງສືຮັບຮອງເຫລົ່ານີ້, ເພື່ອເຂົ້າສູ່ລະບົບ LNSW ເພື່ອດຳເນີນຂະບວນການປົດລັອກບັນຊີ.
ທ່ານຈຳເປັນຈະຕ້ອງໄດ້ກຳນົດລະຫັດຜ່ານໃຫມ່ໃນການເຂົ້າສູ່ລະບົບຄັ້ງທີ1.
ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ສອບຖາມທີມງານບໍລິຫານລະບົບ LNSW ດ້ວຍ 0307776699, ຫລືສົ່ງອີເມວໄປຫາ helpdesk@laonsw.net.

ທີມງານບໍລິຫານລະບົບ/ແຈ້ງພາສີປະຕູດຽວ
ໝາຍເຫດ: ນີ້ເປັນພຽງລະບົບສ້າງຂໍ້ຄວາມແຈ້ງ. ບໍ່ຈຳເປັນຕອບກັບຂໍ້ຄວາມນີ້.



2. ປ້ອນລະຫັດ ຜູ້ນຳໃຊ້ໃສ່
3. ປ້ອນລະຫັດຜ່ານໃສ່
4. ບວກເລກ 64+45= 109 ໃສ່
5. ກົດໃສ່ປຸ່ມ " OK "



**ໝາຍເຫດ:** ໃນກໍລະນີ, ບອກເລກຍາກໃຫ້ກົດໃສ່ປຸ່ມ “⟳” ເພື່ອປ່ຽນເລກໃໝ່ ແລ້ວຈຶ່ງປ້ອນຜົນບວກໃສ່ຫ້ອງດັ່ງກ່າວ




6. ຫຼັງຈາກນັ້ນກົດໃສ່ປຸ່ມ OK , ຈະມີຂໍ້ຄວາມແຈ້ງເຕືອນໃຫ້ປ່ຽນລະຫັດຜ່ານໃໝ່ ແລ້ວກົດໃສ່ປຸ່ມ “OK” ເພື່ອປ່ຽນລະຫັດຜ່ານໃໝ່




7. ປ້ອນລະຫັດຜ່ານປະຈຸບັນ ແລະ 2 ຫ້ອງສຸດທ້າຍປ້ອນລະຫັດໃໝ່ໃສ່
8. ກົດຕິກໃສ່ຫ້ອງນ້ອຍໆ ໃຫ້ເປັນເຄື່ອງໝາຍຖືກ “✔”
9. ກົດໃສ່ປຸ່ມ “OK”
10. ຫຼັງຈາກນັ້ນ, ຈະມີຂໍ້ຄວາມການປ່ຽນລະຫັດຜ່ານໃໝ່ສຳເລັດ ຂຶ້ນໜ້າຈໍ ແລ້ວກົດໃສ່ປຸ່ມ “OK”




## III. ກໍລະນີ ລືມລະຫັດຜ່ານ (ຕ້ອງການປ່ຽນລະຫັດຜ່ານໃໝ່) / Forget password

1. ກົດໃສ່ປຸ່ມ "Forget password"




2. ແລ້ວຈະມີໜ້າຈໍນີ້ເປີດຂຶ້ນມາ, ປ້ອນລະຫັດຜູ້ນຳໃຊ້ ແລະ ອີເມລ໌ຂອງຜູ້ນຳໃຊ້
3. ກົດຕິກໃສ່ຫ້ອງນ້ອຍໆ ໃຫ້ເປັນເຄື່ອງໝາຍຖືກ "✔"
4. ກົດໃສ່ປຸ່ມ "OK"
5. ຫຼັງຈາກນັ້ນ, ຈະມີຂໍ້ຄວາມແຈ້ງເຕືອນຂຶ້ນໜ້າຈໍ ແລ້ວກົດໃສ່ປຸ່ມ "OK" ແລ້ວທ່ານຈະໄດ້ຮັບອີເມລ໌ແຈ້ງເຕືອນສຳລັບລະຫັດຜ່ານໃໝ່ (ໃຫ້ດຳເນີນການປ່ຽນລະຫັດຜ່ານໃໝ່ ຄືດັ່ງທີ່ລະບຸໄວ້ຂ້າງເທິງນີ້)




## IV. ຂໍ້ມູນເພີ່ມເຕີມ

ເຈົ້າໜ້າທີ່ກົມຂຶ້ນທະບຽນຍານພາຫະນະ ຂອງກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ (ຜູ້ທີ່ໄດ້ຮັບມອບໝາຍດຳເນີນງານທີ່ກ່ຽວຂ້ອງ) ທຸກໆ ຂັ້ນສາມາດຄົ້ນຫາໃບອະນຸຍາດທີ່ໄດ້ອະນຸມັດ ແລະ ໃບຄຳຮ້ອງຂໍອະນຸຍາດທີ່ສົ່ງຈາກຜູ້ນຳເຂົ້າ/ ຜູ້ສົ່ງອອກ ດ້ວຍປຸ່ມ **"ໃບອະນຸຍາດ".**




### 4.1 ການຄົ້ນຫາຂໍ້ມູນຂອງໃບອະນຸຍາດ

1. ກົດໃສ່ ອະນຸຍາດໃຫ້ຄົ້ນຫາໄດ້
2. ປ້ອນເລກທີ່ໃບອະນຸຍາດໃສ່
3. ກົດໃສ່ປຸ່ມ

4. ກົດໃສ່ແຖວຂອງໃບອະນຸຍາດ
5. ກົດໃສ່ປຸ່ມ (ເພື່ອເປີດໃບອະນຸຍາດ)
6. ກົດໃສ່ປຸ່ມ






ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
LAO PEOPLE'S DEMOCRATIC REPUBLIC
PEACE INDEPENDENCE DEMOCRACY UNITY PROSPERITY

ກະຊວງໂຍທາທິການ ແລະ ຂົນສົ່ງ / Ministry of Public Work and Transport
ກົມຂົນສົ່ງ / Department of Transport — ເລກທີ / Reference No: 00152137 ກຂສ / DOT
ນະຄອນຫຼວງວຽງຈັນ/ Vientiane ວັນທີ / Date 05/07/2019

**ໃບອະນຸຍາດນຳເຂົ້າທາງດ້ານເຕັກນິກຍານພາຫະນະ / Vehicle Technical Import License**

- ອີງຕາມກົດໝາຍວ່າດ້ວຍການຈາລະຈອນທາງບົກ ເລກທີ 23/ສພຊ,ລົງວັນທີ 12/12/2012 / Reference to Land Traffic Law, Issued No:23/NA. Dated:12 Dec 2012
- ອີງຕາມໃບອະນຸຍາດນຳເຂົ້າເລກທີ / Reference to Import License No: 00152129 ກຂອ / DIMEX, ວັນທີ / Date: 05/07/2019
-
-

**ກົມຂົນສົ່ງເຫັນດີອອກອະນຸຍາດນຳເຂົ້າທາງດ້ານເຕັກນິກນຳຍານພາຫະນະໃຫ້ແກ່/ The Department of Transport grants the import Vehicle Technical Approval to:**

Phetdavanh Logistic Co., Ltd — ໂທລະສັບ / Telephone : 020 23626265 .ແຟັກ / Fax : 021

1. **ຈຸດປະສົງໃນການນຳເຂົ້າ / Purpose of Import :** ຖາວອນ / Permanent
2. **ຂໍ້ມູນທົ່ວໄປທາງດ້ານເຕັກນິກ / Specifications**

| | | | |
|---|---|---|---|
| ປະເພດລົດ / Classification: Car | ປີຜະລິດ / Model Year: 2019 | ພວງມະໄລ / Steering: L | ຈຳນວນບ່ອນນັ່ງ / Seat : 5 |
| ຍີ່ຫໍ້ / Maker: TOYOTA | ຈຳນວນລໍ້ / Wheel:4 | ຈຳນວນເພົາ / Axle: 2 | ສະພາບເຕັກນິກ / Technical condition: |
| ລຸ້ນ / Model: CAMERY | ນຳໃຊ້ພະລັງງານ / Energy : | ແອັດຊັງ / Gazoline | ☐80% ☑100% |
| ຄວາມແຮງ / Displacement : 2000CC | ນ້ຳໜັກລວມ / Gross: 311080 (kg); | | ນ້ຳໜັກເປົ່າ / Curb: 2222 (kg); |
| ຂະໜາດລົດ / Dimensions: ຄວາມສູງ / Height: 1555 (mm); | ຄວາມຍາວ / Length: 4555 (mm); | | ຄວາມກວ້າງ / Width:1999 (mm); |

3. **ຂໍ້ມູນສະເພາະຂອງຍານພະຫະນະ / Vehicle Identity**

| ລ/ດ / No | ເລກຈັກ / Engine Number | ເລກຖັງ / Chassis Number | ສີ / Color |
|---|---|---|---|
| 1 | AJF72E-2150132 | MLHJF7284K4100131 | ເທົາ |
| 2 | AJF72E-2150133 | MLHJF7284K4100132 | ເທົາ |
| 3 | AJF72E-2150134 | MLHJF7284K4100133 | ເທົາ |
| 4 | AJF72E-2150135 | MLHJF7284K4100134 | ເທົາ |
| 5 | AJF72E-2150136 | MLHJF7284K4100135 | ເທົາ |
| 6 | AJF72E-2150137 | MLHJF7284K4100136 | ເທົາ |
| 7 | AJF72E-2150138 | MLHJF7284K4100137 | ເທົາ |
| 8 | AJF72E-2150139 | MLHJF7284K4100138 | ເທົາ |
| 9 | AJF72E-2150140 | MLHJF7284K4100139 | ເທົາ |
| 10 | AJF72E-2150141 | MLHJF7284K4100140 | ເທົາ |
| 11 | AJF72E-2150142 | MLHJF7284K4100141 | ເທົາ |
| 12 | AJF72E-2150143 | MLHJF7284K4100142 | ເທົາ |
| 13 | AJF72E-2150144 | MLHJF7284K4100143 | ເທົາ |
| 14 | AJF72E-2150145 | MLHJF7284K4100144 | ເທົາ |
| 15 | AJF72E-2150146 | MLHJF7284K4100145 | ເທົາ |
| 16 | AJF72E-2150147 | MLHJF7284K4100146 | ເທົາ |
| 17 | AJF72E-2150148 | MLHJF7284K4100147 | ເທົາ |
| 18 | AJF72E-2150149 | MLHJF7284K4100148 | ເທົາ |
| 19 | AJF72E-2150150 | MLHJF7284K4100149 | ເທົາ |
| 20 | AJF72E-2150151 | MLHJF7284K4100150 | ເທົາ |

4. **ໝາຍເຫດ / Remark**

1) ຍານພາຫະນະທີ່ໄດ້ຮັບອະນຸຍາດຕ້ອງນຳເຂົ້າກ່ອນວັນທີ/ The vehicles must be imported before 05/10/2019
2) ດ່ານນຳເຂົ້າ / Custom Clearance Office : R5C10

ຫົວໜ້າກົມ / Director General
ດຣ. ບຸນຕາ ອ່ອນນາວົງ
Dr. Bounta ONNAVONG

7. ໃບອະນຸຍາດຫຼັກ ໝາຍເຖິງຂໍ້ມູນຂໍໃບອະນຸຍາດນຳເຂົ້າ ທີ່ຜູ້ປະກອບການຍື່ນໄປຫາກົມການນຳເຂົ້າ ແລະ ສົ່ງອອກ ຂອງກະຊວງ ອຸດສາຫະກຳ ແລະ ການຄ້າ




8. ກົດໃສ່ໃບອະນຸຍາດເພີ່ມເຕີມ ໝາຍເຖິງຂໍ້ມູນດ້ານເຕັກນິກ ທີ່ຜູ້ປະກອບການຍື່ນໄປຫາກົມຂົນສົ່ງ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ



- ຂໍ້ມູນທົ່ວໄປກ່ຽວກັບເຕັກນິກຂອງພາຫະນະ




- ເອກະສານຄັດຕິດ
9. ເລືອກເອກະສານທີ່ຕ້ອງການເບິ່ງລາຍລະອຽດ
10. ກົດໃສ່ປຸ່ມ 




## 4.2 ການຄົ້ນຫາດ້ວຍເລກທີຂອງໃບຄໍາຮ້ອງ

1. ກົດໃສ່ 
2. ປ້ອນເລກທີ ID ຂອງໃບຄໍາຮ້ອງໃສ່
3. ກົດໃສ່ ປຸ່ມຄົ້ນຫາ
4. ຈາກນັ້ນໃບອະນຸຍາດຈະປະກົດຂຶ້ນມາໜ້າຈໍ



ນອກຈາກວິທີການຄົ້ນຫາດ້ວຍເລກທີຂອງໃບຄຳຮ້ອງແລ້ວ, ທ່ານຍັງສາມາດຄົ້ນຫາໄດ້ອີກຫຼາຍວິທີເຊັ່ນ:

- ➔ ເລກປະຈຳຕົວຜູ້ເສຍອາກອນ,
- ➔ ວັນທີການອອກໃບອະນຸຍາດ ຈົນເຖິງວັນທີສຸດທ້າຍທີ່ຕ້ອງການຄົ້ນຫາ,
- ➔ ປະເພດຂອງໃບອະນຸຍາດ
- ➔ ກະຊວງ ແລະ ກົມທີ່ອອກໃບອະນຸຍາດ,
- ➔ ສະຖານະຂອງໃບອະນຸຍາດ.
- ➔ ID ຂອງຜູ້ສະເໜີຂໍໃບອະນຸຍາດ




## 4.3 ວິທີການກວດເບິ່ງປະຫວັດ ແລະ ຄຳເຫັນຂອງການອະນຸມັດ (Event Logs)

1. ກົດໃສ່ 
2. ປ້ອນເລກທີຂອງໃບອະນຸຍາດໃສ່
3. ກົດໃສ່ ປຸ່ມຄົ້ນຫາ
4. ເລືອກກົດໃສ່ແຖວໃບອະນຸຍາດທີ່ປະກົດຂຶ້ນມາໃນໜ້າຈໍນັ້ນ
5. ຈາກນັ້ນໃຫ້ກົດໃສ່ຄຳສັ່ງ 



6. ຈາກນັ້ນລະບົບກໍ່ຈະສະແດງການດຳເນີນງານຕ່າງໆ ຂອງແຕ່ລະຂັ້ນຕອນ ຊຶ່ງມີລາຍລະອຽດດັ່ງນີ້:

✓ ບັນຊີຂອງຜູ້ນຳເຂົ້າ/ ຜູ້ສົ່ງອອກ (user account ID) ແລະ ບັນຊີຂອງຜູ້ອະນຸມັດທຸກໆຂັ້ນ

✓ ວັນທີ, ເດືອນ, ປີ ແລະ ເວລາ ເລີ່ມແຕ່ຂັ້ນຕອນການຂໍໃບອະນຸຍາດ ຈົນເຖິງຂັ້ນຕອນການອະນຸມັດຂອງໃບອະນຸຍາດ

✓ ຄຳເຫັນຂອງແຕ່ລະຂັ້ນຂອງຜູ້ອະນຸມັດ




**<u>ສຳເລັດທຸກຂັ້ນຕອນ</u>**